ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2008 / ອຄ.ສລທ

ນະຄອນຫຼວງວຽງຈັນ, ວັນທີ 19 ກັນຍາ 2012

# ແຈ້ງການ

ເຖິງ: ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມ, ນັກທຸລະກິດ(ພາຍໃນ ແລະ ຕ່າງປະເທດ)

ເລື່ອງ: ຄຳແນະນຳເພີ່ມເຕີມ ແຈ້ງການ (ເລກທີ 0458 /ອຄ.ສລທ,) ແລະ ບົດແນະນຳ (ເລກທີ 368/ອຄ.ສລທ)

- ອີງໃສ່ແຈ້ງການ, ສະບັບເລກທີ 0458 /ອຄ.ສລທ, ລົງວັນທີ 1 ມີນາ 2012, ກ່ຽວກັບຂອບເຂດການຂຶ້ນທະບຽນວິສາຫະກິດ ສຳລັບການລົງທຶນໃນກິດຈະການທົ່ວໄປ ລະຫວ່າງກະຊວງ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ;
- ອີງຕາມບົດແນະນຳ, ສະບັບເລກທີ 368/ອຄ.ສລທ, ລົງວັນທີ 1 ມີນາ 2012, ກ່ຽວກັບການສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ຢູ່ ສປປ ລາວ.

ເພື່ອໃຫ້ການຈັດຕັ້ງປະຕິບັດ ກ່ຽວກັບການຍື່ນຄຳຮ້ອງ ປ່ຽນແປງເນື້ອໃນທະບຽນວິສາຫະກິດ, ການອະນຸມັດຄວັດກາປະທັບຂອງສາຂາ ວິສາຫະກິດ (ນິຕິບຸກຄົນ) ມີຄວາມເປັນເອກະພາບ ສະດວກ ແລະ ຍົກສູງໄດ້ບົດບາດການຄຸ້ມຄອງທະບຽນວິສາຫະກິດລະຫວ່າງກະຊວງ ແລະທ້ອງຖິ່ນ. ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ວິສາຫະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດກ່ອນແຈ້ງການ (ເລກທີ 0458/ອຄ.ສລທ) ແມ່ນໃຫ້ກົມສົ່ງເສີມການລົງທຶນທົ່ວໄປ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງປະສານກັນ ເພື່ອມອບເອກະສານ (ທັງ Hard & Shoft) ກ່ຽວກັບວິສາຫະກິດທີ່ຕົນໄດ້ຂຶ້ນທະບຽນວິສາຫະກິດຜ່ານມາ (ແຕ່ນອນໃນຂອບເຂດຄວາມຮັບຜິດຊອບຂອງກົມ ຫລື ຂອງພະແນກຕາມແຈ້ງການດັ່ງກ່າວມາເທິງນີ້) ໃຫ້ກັນ ແລະ ກັນ ເພື່ອທັນເຂົ້າສູ່ລະບົບການຄຸ້ມຄອງ ຕິດຕາມ ທີ່ຖືກຕ້ອງເທື່ອລະກ້າວ.

2. ພາຍຫຼັງການຂຶ້ນທະບຽນວິສາຫະກິດ ຕາມແຈ້ງການ(ເລກທີ 0458/ອຄ.ສລທ) ແຕ່ພາຍຫຼັງມາວິສາຫະກິດມີການປ່ຽນແປງເນື້ອໃນທະບຽນວິສາຫະກິດ ຊຶ່ງພາໃຫ້ຂອບເຂດການຂຶ້ນທະບຽນວິສາຫະກິດ ແລະ ການຄຸ້ມຄອງທະບຽນວິສາຫະກິດປ່ຽນແປງໄປ (ເຊັ່ນ: ການໂອນຮຸ້ນລະຫວ່າງຜູ້ຖືຮຸ້ນພາຍໃນ ແລະ ຕ່າງປະເທດ ເປັນເຫດໃຫ້ຂັ້ນກະຊວງຄຸ້ມຄອງ ກາຍເປັນຂັ້ນພະແນກ ຫລື ຂັ້ນພະແນກກາຍເປັນຂັ້ນກະຊວງ) ແມ່ນໃຫ້ປະຕິບັດ ດັ່ງນີ້ :

2.1. ໃນກໍລະນີ ວິສາຫະກິດໃດໜຶ່ງ ທີ່ກະຊວງຂຶ້ນທະບຽນວິສາຫະກິດໃຫ້ ແຕ່ປ່ຽນແປງເນື້ອໃນທະບຽນວິສາຫະກິດ ກາຍເປັນຂັ້ນພະແນກຄຸ້ມຄອງ ແມ່ນໃຫ້ວິສາຫະກິດດັ່ງກ່າວ ຍື່ນຄໍາຮ້ອງເຖິງກົມສົ່ງເສີມການລົງທຶນທົ່ວໄປ ເພື່ອພິຈາລະນາປ່ຽນແປງເນື້ອໃນທະບຽນວິສາຫະກິດໃຫ້ກ່ອນ ແລ້ວໃຫ້ກົມເຮັດສະໂນດແຈ້ງ (ພ້ອມສໍາເນົາໃບທະບຽນວິສາຫະກິດໃໝ່) ໃຫ້ພະແນກທີ່ກ່ຽວຂ້ອງຊາບ ແລະ ຄຸ້ມຄອງຕໍ່ໄປ.

2.2. ໃນກໍລະນີ ວິສາຫະກິດໃດໜຶ່ງ ທີ່ພະແນກຂຶ້ນທະບຽນວິສາຫະກິດໃຫ້ ແຕ່ປ່ຽນແປງເນື້ອໃນທະບຽນວິສາຫະກິດ ກາຍເປັນຂັ້ນກະຊວງຄຸ້ມຄອງ ແມ່ນໃຫ້ພະແນກແນະນໍາ ວິສາຫະກິດດັ່ງກ່າວ ມາຍື່ນຄໍາຮ້ອງໂດຍກົງເຖິງກົມສົ່ງເສີມການລົງທຶນທົ່ວໄປ ເພື່ອພິຈາລະນາປ່ຽນແປງເນື້ອໃນທະບຽນວິສາຫະກິດໃຫ້ (ເນື່ອງຈາກການພິຈາລະນາມີຄວາມຊັບຊ້ອນ). ຫຼັງຈາກໄດ້ຂຶ້ນທະບຽນວິສາຫະກິດປ່ຽນແປງເນື້ອໃນແລ້ວ ໃຫ້ກົມເຮັດສະໂນດແຈ້ງ (ພ້ອມສໍາເນົາໃບທະບຽນວິສາຫະກິດໃໝ່) ໃຫ້ພະແນກທີ່ກ່ຽວຂ້ອງຊາບ ແລະ ເຮັດໝາຍເຫດໄວ້ໃນແຟ້ມປະຫວັດເອກະສານທະບຽນວິສາຫະກິດຂອງວິສາຫະກິດດັ່ງກ່າວ;

2.3. ໃນສອງກໍລະນີເທິງນີ້ ຫ້າມບໍ່ໃຫ້ພະແນກຂຶ້ນທະບຽນວິສາຫະກິດປ່ຽນແປງເນື້ອໃນໃຫ້ກ່ອນ ;

3. ການສ້າງຕັ້ງສາຂາ ຂອງວິສາຫະກິດ ຈະປະຕິບັດໄດ້ ກໍຕໍ່ເມື່ອ :

- ເປັນວິສາຫະກິດ (ນິຕິບຸກຄົນ) ;
- ໄດ້ລະບຸໄວ້ໃນກົດລະບຽບຂອງວິສາຫະກິດ (ນິຕິບຸກຄົນ). ກໍລະນີເພີ້ມສາຂາ ຕ້ອງຍື່ນຄໍາຮ້ອງປ່ຽນແປງເນື້ອໃນທະບຽນວິສາຫະກິດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ກ່ອນ.

4. ເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ຂຶ້ນທະບຽນວິສາຫະກິດ ໃຫ້ແກ່ວິສາຫະກິດໃດ ມີສິດໃນການອອກໃບອະນຸຍາດຄົວດກາປະທັບໃຫ້ແກ່ (ສາຂາ) ຂອງວິສາຫະກິດ ນັ້ນ.

5. ການອອກໃບອະນຸຍາດຄົວດກາປະທັບ ໃຫ້ວິສາຫະກິດ (ນິຕິບຸກຄົນ) ຕ້ອງປະຕິບັດຢ່າງເຂັ້ມງວດ:

- ຕາມເງື່ອນໄຂ ທີ່ໄດ້ບົ່ງໄວ້ໃນ ຂໍ້ 3 ຂອງແຈ້ງການສະບັບນີ້ ;
- ວິສາຫະກິດ ທີ່ສ້າງຕັ້ງສາຂາ ຕ້ອງນໍາເອົາໃບຢັ້ງຢືນການລົງທະບຽນສ້າງຕັ້ງສາຂາຂອງຕົນ ຈາກພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ຫລື ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ (ຖ້າໄດ້ມອບ) ທີ່ກ່ຽວຂ້ອງ ບ່ອນຊຶ່ງສາຂາຕັ້ງຢູ່ ມາແຈ້ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເພື່ອເປັນບ່ອນອີງໃນການອອກໃບອະນຸຍາດຄົວດກາປະທັບໃຫ້;

6. ຜູ້ເປັນເຈົ້າຂອງວິສາຫະກິດສ່ວນບຸກຄົນ ສາມາດຂະຫຍາຍທຸລະກິດຂອງຕົນໄດ້ ໂດຍການສ້າງຕັ້ງວິສາຫະກິດສ່ວນບຸກຄົນໃໝ່ ເຊັ່ນ : ຮ້ານເຈົ້າເກົ່າໜຶ່ງ, ຮ້ານເຈົ້າເກົ່າສອງ. ວິສາຫະກິດສ່ວນບຸກຄົນບໍ່ສາມາດສ້າງຕັ້ງສາຂາໄດ້.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າ

ດຣ. ນາມ ວິຍະເກດ